# ສະຫລອງພຣະຈິດເຈົ້າສະເດັດລົງມາ

**ອາທິດທີ 20 ພຶດສະພາ 2018**




**ບົດອ່ານຈາກໜັງສືອັກຄະສາວົກ 2, 1-11**

ພໍເຖິງວັນສະຫລອງ « ເປັນເຕກອສເຕ », ພວກສາວົກທັງໝົດມາໂຮມກັນຢູ່ບ່ອນດຽວ. ທັນທີກໍເກີດມີສຽງດັງມາຈາກທ້ອງຟ້າຄືສຽງລົມພາຍຸອັນແຮງກ້າສະນັ່ນກ້ອງທົ່ວເຮືອນບ່ອນພວກເຂົານັ່ງໂຮມກັນຢູ່. ພວກເຂົາແນມເຫັນແປວໄຟມີຮູບຄືລີ້ນແຍກໄປລອຍຢູ່ເທິງຫົວພວກເຂົາທຸກຄົນ. ທຸກຄົນຈຶ່ງເຕັມພຽບດ້ວຍພຣະຈິດເຈົ້າ ແລ້ວພາກັນເລີ່ມປາກພາສາຕ່າງໆຕາມທີ່ພຣະຈິດເຈົ້າຊົງດົນໃຈໃຫ້ເວົ້າ.

ໃນເວລານັ້ນພໍດີມີພວກຢູເດວໃຈສັດທາມາຈາກທຸກປະເທດຄ້າງຄືນຢູ່ນະຄອນເຢຣູຊາແລມ. ເມື່ອໄດ້ຍິນສຽງຜູ້ຄົນກໍພາກັນແລ່ນມາເບິ່ງແລະໃຜໆກໍຮູ້ສຶກງຶດປະຫລາດໃຈຍິນພວກສາວົກປາກເວົ້າພາສາຂອງຕົນເອງ. ພວກເຂົາທັງຫລາຍຮູ້ສຶກອັດສະຈັນໃຈພາກັນເວົ້າວ່າ: ພວກທີ່ປາກເວົ້າຢູ່ນີ້ບໍ່ແມ່ນຊາວກາລີເລໝົດທຸກຄົນບໍ? ແຕ່ເປັນແນວໃດ, ໃຜໆໃນພວກເຮົາຈຶ່ງໄດ້ຍິນພວກເຂົາປາກເວົ້າພາສາບ້ານເກີດເມືອງນອນຂອງຕົນ? ແລະແມ່ນວ່າພວກເຮົາເປັນຊາວປາຣເຕ, ຊາວເມດີ, ຊາວເອລານ ຫລືຢູ່ເມໂຊໂປຕາມີອາ, ຢູເດອາ, ຢູ່ກາປາໂດຊີອາ ,ຢູ່ຮີມທະເລດຳ ຫລືມາຈາກປະເທດຟຣີຊີອາແລະປັມຟີລີອາ, ຈາກປະເທດເອຢິບ, ຈາກແຂວງລີບີອາໃນບໍລິເວນຊີເຣເນ ຫລືເປັນຄົນແຂກມາຈາກເມືອງໂຣມາ, ເປັນຊາດຢູເດວແທ້ ຫລືພວກທີ່ໄດ້ກັບໃຈມາຖືຮີດຄອງຢູເດວ ແລະພວກຊາວເກາະເກຣເຕ ຫລືຊາວອາຣາບີອາກໍຕາມ,ໃຜໆໃນພວກເຮົາກໍໄດ້ຍິນພວກເຂົາເວົ້າປະກາດສັນລະເສີນສິ່ງມະຫັດສະຈັນຂອງພຣະເຈົ້າໃນພາສາພື້ນເມືອງຂອງເຮົາເອງ.

ນີ້ແມ່ນວາຈາຂອງພຣະເປັນເຈົ້າ

**ບົດແບ່ງປັນ: ຈາກໜັງສືກິດຈະການຂອງພວກອັກຄະສາວົກ 2, 1-11**

ໃນໜັງສືກິດຈະການຂອງພວກອັກຄະສາວົກກ່າວວ່າ: *« ພໍເຖິງວັນ ເປັນເຕກອສເຕ ພວກອັກຄະທຳມະທູດມາເຕົ້າໂຮມກັນຢູ່ບ່ອນດຽວ ».* ຄຳວ່າ: « ເປັນເຕກອສເຕ » ໝາຍເຖິງຫ້າສິບວັນ. ນັບແຕ່ວັນທີ່ພຣະເຢຊູເຈົ້າກັບເປັນຄືນມາຈາກຄວາມຕາຍ. ໃນຊ່ວງເວລານີ້ ພວກສາວົກມີທັງເລື່ອງມ່ວນຊື່ນ ແລະເລື່ອງໂສກເສົ້າ. ເລື່ອງມ່ວນຊື່ນ, ຍ້ອນພວກເຂົາໄດ້ເຫັນພຣະເຢຊູເຈົ້າກັບເປັນຄືນມາຈາກຄວາມຕາຍແລະໄດ້ປະຈັກມາຫາພວກເຂົາ.

ພໍມາຮອດເວລາສີ່ສິບວັນ ແມ່ນມື້ທີ່ພຣະເຢຊູເຈົ້າສະເດັດເຫາະຂຶ້ນສະຫວັນ ເພື່ອຄືນເມືອຫາພຣະບິດາ. ແຕ່ພຣະອົງບໍ່ໄດ້ປະໃຫ້ພວກສາວົກຕ້ອງຢູ່ໂດດດ່ຽວໃນໂລກນີ້. ພຣະອົງສັນຍາຈະປະທານພຣະຈິດຂອງພຣະອົງລົງມາຢູ່ນຳພວກເຂົາ. ປານນັ້ນກໍດີ, ພວກສາວົກກໍຍັງຢູ່ໃນຄວາມຢ້ານກົວ. ດັ່ງໃນໜັງສືກິດຈະການຂອງພວກອັກຄະສາວົກທີ່ກ່າວວ່າ: *« ພວກອັກຄະທຳມະທູດມາເຕົ້າໂຮມກັນຢູ່ບ່ອນດຽວ »,* ຍ້ອນຢ້ານກົວ. ແຕ່ທັນໃດນັ້ນ ກໍເກີດມີສຽງດັງມາຈາກທ້ອງຟ້າຄືສຽງລົມພາຍຸແຮງກ້າ. ຈາກນັ້ນ, ພວກເພິ່ນກໍແນມເຫັນຊໍ່ໄຟປາກົດມາເປັນຮູບຄືລີ້ນລອຍຢູ່ເທິງພວກເພິ່ນຜູ້ລະຊໍ່. ທຸກຄົນຈຶ່ງເຕັມພຽບດ້ວຍພຣະຈິດເຈົ້າ.

ພຣະຈິດເຈົ້າສະເດັດລົງມາຜ່ານທາງເຄື່ອງໝາຍຂອງ: « ລົມ ». ລົມທີ່ພັດຄວາມຢ້ານກົວ, ຄວາມກັງວົນ ແລະຄວາມບໍ່ເຊື່ອໝັ້ນໃນວາຈາຂອງພຣະເຈົ້າອອກໄປຈາກດວງໃຈຂອງພວກສາວົກ. ແລະເຄື່ອງໝາຍທີສອງທີ່ບົ່ງບອກເຖິງອົງພຣະຈິດເຈົ້າຄື: « ໄຟ ». ໄຟທີ່ເຜົາສູມດວງໃຈຂອງພວກສາວົກໃຫ້ມີຄວາມຮ້ອນຮົນ, ກ້າຫານ, ສັດທາ ແລະເຊື່ອໝັ້ນໃນວາຈາຂອງພຣະເຈົ້າ. ແລະແມ່ນໄຟນີ້ເອງທີ່ໄດ້ຊຸກດັນພວກສາວົກອອກຈາກຕົວເອງ, ອອກຈາກຄວາມຢ້ານກົວ, ອອກຈາກບ່ອນທີ່ພວກເຂົາເຕົ້າໂຮມກັນເພື່ອໄປປະກາດເຖິງສິ່ງທີ່ພວກເຂົາໄດ້ຮັບ. ແລະທຸກຄົນກໍໄດ້ຍິນພວກສາວົກປາກເວົ້າໃນພາສາຂອງຕົນ. ພາສາທີ່ພວກສາວົກປາກເວົ້ານັ້ນ ບໍ່ແມ່ນພາສາອັງກິດ, ຝລັ່ງເສດ ຫລືພາສາອື່ນໆ. ແຕ່ແມ່ນພາສາແຫ່ງຄວາມຮັກທີ່ມາຈາກພຣະເຢຊູເຈົ້າກຣິສໂຕເຈົ້າ, ຜູ້ໄດ້ຍອມຕາຍເພື່ອມະນຸດທຸກຄົນແລະໄດ້ກັບເປັນຄືນມາຈິງແທ້. ນີ້ແລແມ່ນພາສາທີ່ທຸກຄົນ, ທຸກປະເທດໄດ້ຍິນແລະເຂົ້າໃຈຕາມຄວາມຮັບຮູ້ຂອງໃຜລາວ.

ພວກເຮົາທຸກຄົນຜູ້ໄດ້ຮັບສິນລ້າງບາບແລະສິນກຳລັງ, ພວກເຮົາລ້ວນແຕ່ໄດ້ຮັບພຣະຈິດເຈົ້າເໝືອນກັບພວກອັກຄະສາວົກ. ພວກເຮົາລ້ວນແຕ່ມີໜ້າທີ່ປະກາດຂ່າວດີຊຶ່ງພວກເຮົາໄດ້ຮັບຄື: ອົງພຣະເຢຊູກຣິສໂຕເຈົ້າໄດ້ຕາຍເພື່ອບາບຂອງພວກເຮົາແລະພຣະອົງໄດ້ກັບເປັນຄືນມາຈິງແທ້ຕາມທີ່ພຣະອົງໄດ້ຊົງກ່າວໄວ້.

ຂໍໃຫ້ພຣະຈິດເຈົ້າທີ່ພວກເຮົາໄດ້ຮັບ, ຊ່ວຍພວກເຮົາໃຫ້ຮູ້ຈັກປາກເວົ້າໃນພາສາຂອງພວກເຮົາແລະຕາມຄວາມສາມາດຂອງພວກເຮົາແຕ່ລະຄົນ ເພື່ອຈະໄດ້ປະກາດເຖິງຄວາມຮັກຂອງພຣະເຈົ້າທີ່ມີຕໍ່ພວກເຮົາ ແລະຕໍ່ທຸກຄົນດ້ວຍເທີ້ນ. ອາແມນ

ຄຸນພໍ່ ອັງຕວນ ກຽດຕິສັກ